# ແບບການຂຶ້ນທະບຽນ ສໍາລັບຜູ້ຮັບອຸດໜູນບໍານານ ຫຼື ເສຍອົງຄະ ຕາມດໍາລັດ 272/ນຍ

ອົງການປະກັນສັງຄົມແຫ່ງຊາດ

ອປຊ 02

| ສໍາລັບ ຜູ້ຮັບບໍານານ ຫຼື ເສຍອົງຄະ | ສໍາລັບ ພະນັກງານ ອປຊ |
|---|---|
| ຊື່ຫ້ອງການທີ່ທ່ານຮັບເງິນເດືອນບໍານານ ຫຼື ເສຍອົງຄະ:........................ | ເລກທີບັດປະກັນສັງຄົມ: ☐☐☐☐☐☐☐☐☐☐☐☐ |
| ........................................................................ | ກຸ່ມເອກະສານ:............................................................ |
| ເບີໂທຫ້ອງການທີ່ທ່ານຮັບເງິນເດືອນ:.......................................... | ເລກທີຂາເຂົ້າ:..................; ວັນ,ເດືອນ,ປີ:........................................ |
| ວັນ,ເດືອນ,ປີຮັບບໍານານ ຫຼື ເສຍອົງຄະ.............../.........../............ | ຜູ້ບັນທຶກຂໍ້ມູນ:............................................................ |

## 1/ ຂໍ້ມູນສ່ວນຕົວຂອງຜູ້ຮັບ ບໍານານ ຫຼື ເສຍອົງຄະ ຕາມດໍາລັດ 272/ນຍ

- ຊື່ ☐ ນາມສະກຸນ ☐ ເພດ: ☐ ຊາຍ, ☐ ຍິງ;
- ວັນ,ເດືອນ,ປີເກີດ:......../........./.........; ເລກທີບັດປະຈໍາຕົວ:..............................; ເລກທີສໍາມະໂນຄົວ:..............; ໂທລະສັບ:.........................;
- ບ້ານເກີດ:..............................................; ເມືອງເກີດ:.............................................; ແຂວງເກີດ:.......................................................;
- ປະຈຸບັນຢູ່ບ້ານ:........................................; ເມືອງ:..................................................; ແຂວງ:...........................................................;
- ສະຖານະພາບ: ☐ ໂສດ, ☐ ແຕ່ງດອງ, ☐ ຮ້າງ, ☐ ໝ້າຍ; ໂຮງໝໍທີ່ເລືອກ:......................................, ໂຮງໝໍສົ່ງຕໍ່ທີ່ເລືອກ.................................;

## 2/ ຂໍ້ມູນຂອງຄູ່ສົມຣົດ:

- ຊື່ ☐ ນາມສະກຸນ ☐ ເພດ: ☐ ຊາຍ, ☐ ຍິງ; ເປັນຄົນພິການ: ☐ ບໍ່, ☐ ແມ່ນ.
- ວັນ,ເດືອນ,ປີເກີດ:.............../................/..................; ເລກທີບັດປະກັນສັງຄົມຂອງຄູ່ສົມຣົດ : ☐☐☐☐☐☐☐☐☐☐☐☐
- ບ່ອນເຮັດວຽກ:.......................................; ໂຮງໝໍທີ່ເລືອກ:......................................, ໂຮງໝໍສົ່ງຕໍ່ທີ່ເລືອກ...............................................;
- ສະຖານະພາບ: ☐ ລັດຖະກອນ, ☐ ບໍານານ, ☐ ທະຫານ, ☐ ຕໍາຫລວດ, ☐ ເປັນຜູ້ປະກັນ ເລກລະຫັດ: ☐☐☐☐☐☐☐☐☐☐☐☐

## 3/ ຂໍ້ມູນຂອງລູກ: ຈໍານວນລູກ: ☐

| ລໍາດັບ | ຊື່ ແລະ ນາມສະກຸນ | ເພດ | ວັນ,ເດືອນ,ປີເກີດ | ໂຮງໝໍ ທີ່ເລືອກ | ໂຮງໝໍສົ່ງຕໍ່ ທີ່ເລືອກ | ພິການ ບໍ່ | ເລກທີບັດປະກັນສັງຄົມ ຂອງລູກ |
|---|---|---|---|---|---|---|---|
| 1 | | | / / | | | | ☐☐☐☐☐☐☐☐☐☐☐☐ |
| 2 | | | / / | | | | ☐☐☐☐☐☐☐☐☐☐☐☐ |
| 3 | | | / / | | | | ☐☐☐☐☐☐☐☐☐☐☐☐ |
| 4 | | | / / | | | | ☐☐☐☐☐☐☐☐☐☐☐☐ |

**ຂ້າພະເຈົ້າຂໍຢັ້ງຢືນວ່າ ຂໍ້ມູນທີ່ກ່າວມາຂ້າງເທິງນັ້ນ ຖືກຕ້ອງຕາມຄວາມເປັນຈິງທຸກປະການ, ຖ້າມີການຈົງໃຈໃຫ້ຂໍ້ມູນບໍ່ຖືກຕ້ອງ ຂ້າພະເຈົ້າຂໍຮັບຜິດຊອບຕໍ່ກົດໝາຍ**

| | |
|---|---|
| <u>ໝາຍເຫດ</u>: ຖ້າພໍ່ ແລະ ແມ່ ຫາກເປັນຜູ້ປະກັນຕົນທັງສອງ ບໍ່ວ່າຈະເຂົ້າລະບົບປະກັນສັງຄົມພາກໃດພາກໜຶ່ງ ຫຼື ພາກດຽວກັນກໍ່ຕາມ, ກະລຸນາເລືອກ ☑ ການເກີດສິດ ປິ່ນປົວຂອງລູກນໍາ ☐ ພໍ່ ຫຼື ☐ ແມ່ ໄດ້ພຽງຝ່າຍດຽວເທົ່ານັ້ນ. | **ວັນທີ:.............../................/................**<br>**ລາຍເຊັນຂອງຜູ້ກ່ຽວ** |

ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນຈະມີຜົນຕໍ່ການເກີດສິດຮັບອຸດໜູນທີ່ຈະໄດ້ຕາມກົດໝາຍ

# <u>ຄຳແນະນຳ</u>

1. **ແບບພິມສະບັບນີ້ ໃຊ້ສະເພາະຜູ້ຮັບບຳນານ ຫຼື ເສຍອົງຄະ ຕາມດຳລັດ 272/ນຍ ເທົ່ານັ້ນ.**
2. **ກະລຸນາຕື່ມຂໍ້ມູນລົງໃສ່ແບບພິມໃຫ້ຄົບຖ້ວນ ແລະ ຖືກຕ້ອງ ພ້ອມກັບຕິດຄັດເອກະສານຕາມແຕ່ລະກໍລະນີດັ່ງນີ້:**
   - **<u>ກໍລະນີແຈ້ງໂສດ</u>** ຕ້ອງມີ: ☐ ບັດປະຈຳຕົວ ຫຼື ☐ ສຳມະໂນຄົວ ຫຼື ☐ ຂໍ້ຕົກລົງ.
   - **<u>ກໍລະນີແຈ້ງແຕ່ງງານ</u>** ຕ້ອງມີ ☐ ສຳມະໂນຄົວທີ່ມີຊື່ຜູ້ປະກັນຕົນ, ຄູ່ສົມຣົດຢູ່ໃນນັ້ນ ຫຼື ☐ ໃບທະບຽນສົມຣົດ ຫຼື ☐ ໃບສູ່ຂໍ ຫຼື ☐ ໃບຢັ້ງຢືນຈາກນາຍບ້ານ.
   - **<u>ກໍລະນີແຈ້ງເປັນຮ້າງ</u>** ຕ້ອງມີ: ☐ ໃບຢ່າຮ້າງຈາກສານ ຫຼື ☐ ໃບຢັ້ງຢືນການຢ່າຮ້າງຈາກນາຍບ້ານ.
   - **<u>ກໍລະນີເປັນໝ້າຍ</u>** ຕ້ອງມີ: ☐ ໃບຢັ້ງຢືນເສຍຊີວິດຈາກໂຮງໝໍ ຫຼື ☐ ໃບຢັ້ງຢືນການເສຍຊີວິດຈາກບ້ານ ຫຼື ☐ ໃບຢັ້ງຢືນເສຍຊີວິດຈາກຫ້ອງການພາຍໃນເມືອງຕາມແບ່ງຂັ້ນຄຸ້ມຄອງ.
   - **<u>ກໍລະນີແຈ້ງລູກ</u>** ຕ້ອງມີ ☐ ສຳມະໂນຄົວທີ່ມີຊື່ຜູ້ປະກັນຕົນ, ຄູ່ສົມຣົດ ແລະ ລູກ ຢູ່ໃນນັ້ນ ຫຼື ☐ ໃບອອກໂຮງໝໍ (ໃຊ້ສຳລັບເດັກທີ່ມີອາຍຸບໍ່ເກີນສາມເດືອນ) ຫຼື ☐ ໃບຢັ້ງຢືນການເກີດ; **<u>ສຳລັບເດັກທີ່ເອົາມາເປັນລູກລ້ຽງຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.</u>**
3. **ການຂຽນຂໍ້ມູນໃສ່ແບບພິມ: ຕ້ອງໃຫ້ຂໍ້ມູນຖືກຕ້ອງກັບບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ.**
4. ການເລືອກໂຮງໝໍ
   - **ສຳລັບສູນກາງ ແລະ ອ້ອມຂ້າງສູນກາງ ມີໂຮງໝໍໃຫຍ່ 4 ແຫ່ງ ຄື ມະໂຫສົດ, ເສດຖາທິລາດ, ມິດຕະພາບ ແລະ ໂຮງໝໍ 103** ທ່ານສາມາດເລືອກໄດ້ 1 ແຫ່ງເພື່ອເປັນໂຮງໝໍຫລັກໃນການປິ່ນປົວ ແລະ ບໍ່ຕ້ອງເລືອກໂຮງໝໍເພື່ອສົ່ງຕໍ່ອີກ, ແຕ່ຖ້າທ່ານເລືອກໂຮງໝໍເມືອງເປັນໂຮງໝໍຫລັກໃນການປິ່ນປົວ ທ່ານຕ້ອງເລືອກໂຮງໝໍໃຫຍ່ 1 ແຫ່ງເພື່ອເປັນໂຮງໝໍສົ່ງຕໍ່;
   - ສຳລັບທ້ອງຖິ່ນ ຈະມີໂຮງໝໍໃຫຍ່ພຽງແຫ່ງດຽວ ຄື ໂຮງໝໍແຂວງ, ຖ້າທ່ານເລືອກໂຮງໝໍແຂວງ ຫລື ໂຮງໝໍເມືອງ ເປັນໂຮງໝໍຫລັກໃນການປິ່ນປົວ ທ່ານບໍ່ຕ້ອງເລືອກໂຮງໝໍສົ່ງຕໍ່ອີກ ເພາະລະບົບຈະຕັ້ງແບບອັດຕະໂນມັດ ໂດຍຈະໃຫ້ໂຮງໝໍແຂວງເປັນໂຮງໝໍສົ່ງຕໍ່ເລີຍ, ຍົກເວັ້ນ ແຂວງວຽງຈັນ ເພາະຈະມີໂຮງໝໍໃຫຍ່ຢູ່ 2 ແຫ່ງ ຄື ໂຮງໝໍແຂວງ (ມາເລຍເຕເລຊ້າ) ແລະ ໂຮງໝໍເມືອງວັງວຽງ, ຖ້າທ່ານໃດຢູ່ແຂວງດັ່ງກ່າວ ຫາກເລືອກໂຮງໝໍເມືອງເປັນໂຮງຫລັກໃນການປິ່ນປົວ ທ່ານຕ້ອງເລືອກໂຮງໝໍມາເລຍເຕເລຊ້າ ຫລື ໂຮງໝໍເມືອງວັງວຽງ 1 ແຫ່ງເພື່ອເປັນໂຮງໝໍສົ່ງຕໍ່.

   ສຳລັບທ້ອງຖິ່ນ ຫາກທ່ານຢູ່ແຂວງໃດ ທ່ານຕ້ອງເລືອກໂຮງໝໍພາຍໃນແຂວງນັ້ນເປັນໂຮງໝໍເພື່ອປິ່ນປົວສຸຂະພາບ ແລະ ທ່ານບໍ່ສາມາດເລືອກໂຮງໝໍສົ່ງຕໍ່ເປັນແຂວງອື່ນໄດ້.

| ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນຈະມີຜົນຕໍ່ການເກີດສິດຮັບອຸດໜູນທີ່ຈະໄດ້ຕາມກົດໝາຍ |
|---|